ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 5223-. /ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 05 NOV 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,
ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 04/2026.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບ ມະຕິຂອງກອງ ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 04/2026, ວັນທີ 04 ພະຈິກ 2026, ໂດຍລາຍລະອຽດດັ່ງລຸ່ມນີ້:

1. ອະນຸມັດ ບົດລາຍງານຜົນການດຳເນີນທຸລະກິດ ລວມທັງບົດລາຍງານການເງິນ ຂອງບໍລິສັດ ປະຈຳໄຕມາດ 03 ປີ 2026.
2. ອະນຸມັດ ແຜນການດຳເນີນທຸລະກິດປະຈຳປີ 2027 ຂອງບໍລິສັດ ແລະ ເຫັນດີໃຫ້ນຳສະເໜີຕໍ່ ກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2026 ເພື່ອພິຈາລະນາຮັບຮອງຕາມລະບຽບການ.
3. ອະນຸມັດ ການປັບປຸງໂຄງຮ່າງການຈັດຕັ້ງຂອງບັນດາເຂື່ອນ ທີ່ຂຶ້ນກັບ ຜ-ຟຟລ.
4. ອະນຸມັດ ການສ້າງຕັ້ງສະຖາບັນຝຶກອົບຮົມຂອງ ຜ-ຟຟລ ຢູ່ເຂື່ອນໄຟຟ້ານ້ຳງື່ມ 1.
5. ອະນຸມັດແຜນການຈັດກອງປະຊຸມສະພາບໍລິຫານ ປະຈຳປີ 2027 ໂດຍມີກຳນົດການເບື້ອງຕົ້ນ ດັ່ງນີ້:
   - ວັນທີ 12/02/2027 ປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 1/2027;
   - ວັນທີ 16/03/2027 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 1/2027;
   - ວັນທີ 14/05/2027 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 2/2027;
   - ວັນທີ 20/08/2027 ປະຊຸມສະພາບໍລິຫານສະໄໝສາມັນ ຄັ້ງທີ 3/2027;
   - ວັນທີ 12/11/2027 ປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 4/2027 .

ພ້ອມດຽວກັນນີ້, ວັນ ແລະ ເວລາການຈັດກອງປະຊຸມສະພາບໍລິຫານ ອາດຈະມີການປ່ຽນແປງ ອີງ ຕາມສຽງອີງປະຊຸມ ½ ຂອງສະມາຊິກສະພາບໍລິຫານ; ກອງປະຊຸມສະພາບໍລິຫານສະໄໝວິສາມັນ ອາດຈະຈັດ ຂຶ້ນໄດ້ຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະ ສຳຄັນຂອງວຽກງານຕົວຈິງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la